ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

***********

ກະຊວງ ກະສິກຳ ແລະ ປ່າໄມ້

ເລກທີ 0865 /ກປ.2000

# ບົດແນະນຳ
## ກ່ຽວກັບ ການຈັດຕັ້ງປະຕິບັດ ຂໍ້ກຳນົດຊົ່ວຄາວ ວ່າດ້ວຍການຄຸ້ມຄອງ ແລະ ນຳໃຊ້ທຶນ ທີ່ເກັບໄດ້ ຈາກ ຄ່າພັນທະ ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງທຳມະຊາດ ໃນຂອບເຂດທົ່ວປະເທດ

ເຖິງ ທົ່ວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ.

- ອີງຕາມ ຄຳສັ່ງຂອງນາຍົກລັດຖະມົນຕີ ສະບັບເລກທີ 11/ນຍ, ລົງວັນທີ 23/08/1999.
- ອີງຕາມ ຂໍ້ກຳນົດຊົ່ວຄາວຂອງກະຊວງ ການເງິນ ວ່າດ້ວຍ ການຄຸ້ມຄອງ ແລະ ນຳໃຊ້ທຶນ ທີ່ເກັບໄດ້ຈາກ ຄ່າພັນທະ ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງທຳມະຊາດ ສະບັບເລກທີ 111/ກງ, ລົງວັນທີ 14/01/2000.

ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດຕົວຈິງ ກ່ຽວກັບ ການຄຸ້ມຄອງ ແລະ ນຳໃຊ້ທຶນທີ່ເກັບໄດ້ຈາກ ຄ່າພັນທະ ການຂຸດຄົ້ນໄມ້ ແລະ ເຄື່ອງປ່າຂອງດົງ ທຳມະຊາດ ໄດ້ຖືກຕ້ອງຕາມເປົ້າໝາຍ ແລະ ສະພາບການຄວາມຮຽກຮ້ອງຕ້ອງການ ທັງຮັບປະກັນເຮັດໃຫ້ວຽກງານປູກໄມ້ ສາມາດບັນລຸຕົວເລກ ຄາດໝາຍ ແລະ ມີປະສິດທິຜົນ ທາງດ້ານປະລິມານ ແລະ ຄຸນນະພາບ.

ກະຊວງ ກະສິກຳ ແລະ ປ່າໄມ້ ໄດ້ອອກ ບົດແນະນຳ ດັ່ງນີ້ :

1. ໃນແຕ່ລະປີ ໃຫ້ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ( ຂະແໜງປ່າໄມ້ ) ຂຶ້ນແຜນການຊຸກຍູ້ ແລະ ສົ່ງເສີມປູກໄມ້ເສດຖະກິດ ແລະ ເຄື່ອງປ່າຂອງດົງ ເປັນສິນຄ້າ ພາຍໃນແຂວງຂອງຕົນ ແຜນດັ່ງກ່າວ ຕ້ອງຕິດພັນກັບ ແຜນພັດທະນາ ເສດຖະກິດ-ສັງຄົມຂອງແຂວງ ໂດຍຜ່ານຄວາມເຫັນດີ ແລະ ຮັບຮູ້ ຈາກ ອຳນາດ ການປົກຄອງແຂວງ ຈຶ່ງນຳສົ່ງໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ (ກົມປ່າໄມ້ ແລະ ກົມແຜນການ) ເພື່ອສັງລວມເຂົ້າໃນແຜນພັດທະນາ ກະສິກຳ ແລະ ປ່າໄມ້ ປະຈຳປີ ໃຫ້ທັນກ່ອນກາງເດືອນພຶດສະພາ ຫລື ຊ້າສຸດ ບໍ່ໃຫ້ກາຍທ້າຍເດືອນພຶດສະພາຂອງແຕ່ລະປີ. ຄຽງຄູ່ກັນນັ້ນ ແຜນການນີ້ກໍໃຫ້ສັງລວມເຂົ້າ ຢູ່ໃນແຜນພັດທະນາ ເສດຖະກິດ-ສັງຄົມ ປະຈຳປີຂອງແຂວງ, ກຳແພງນະຄອນ ແລະ ເຂດພິເສດນຳ.

2. ການສ້າງແຜນການ ຕ້ອງບົນພື້ນຖານມີການປະສານສົມທົບ ກັບອຳນາດ ການປົກຄອງທ້ອງຖິ່ນ, ພະແນກການກ່ຽວຂ້ອງ, ໂດຍສະເພາະກັບບັນດາເມືອງທີ່ມີທ່າແຮງ ກ່ຽວກັບ ການຊຸກຍູ້ ແລະ ສົ່ງເສີມປູກໄມ້ເສດຖະກິດ ແລະ ເຄື່ອງປ່າຂອງດົງເປັນສິນຄ້າ.

2.1 ໃນແຜນການ ຕ້ອງກຳນົດລະອຽດເປົ້າໝາຍຂອງການສົ່ງເສີມເຊັ່ນ:

- ບໍລິສັດລັດ ແລະ ເອກະຊົນ
- ບັນດາໂຄງການ ທີ່ກຳລັງດຳເນີນງານ ຢູ່ໃນຂອບເຂດນັ້ນ
- ຄອບຄົວຊາວກະສິກອນ, ກ່ອນອື່ນໝົດ ໃຫ້ເລັ່ງໃສ່ຄອບຄົວ ຊາວໄຮ່ກ່ອນ, ສຳນັກງານ ອົງການ, ກົມກອງ, ລວມໝູ່ ( ເປົ້າໝາຍ ປ່ອຍສິນເຊື່ອ ເປັນວັດຖຸ )
- ເນື້ອທີ່ຂອງແຂວງ ແລະ ເມືອງ ຈະປູກເອງ ໃນມື້ວັນທີ 1 ມິຖຸນາ ແລະ ບ່ອນທີ່ຈະສົ່ງເສີມທົ່ວໆໄປ.

2.2 ຄວາມຕ້ອງການດ້ານງົບປະມານຈ່າຍສຳລັບວຽກງານວິຊາສະເພາະເຊັ່ນ:

- ສຳຫລວດ ຈັດສັນ ເນື້ອທີ່ດິນປູກໄມ້ ໃນຂອບເຂດແຂວງ, ກຳແພງນະຄອນ ແລະເຂດພິເສດ.
- ການສະໜອງແນວພັນ ແຕ່ລະຊະນິດ ທີ່ເໝາະສົມ ໃນແຕ່ລະທ້ອງຖິ່ນ.
- ປະກອບອຸປະກອນ, ພາຫະນະ ຮັບໃຊ້ວຽກງານ ວິຊາສະເພາະ ໃນການສຳຫລວດ ເນື້ອທີ່ ,ສ້າງ ແລະຮັກສາ ສວນຜະລິດແນວພັນ ສຳລັບຜະລິດເບ້ຍໄມ້ ແລະສຳລັບການປູກ ແລະການບົວລະບັດຮັກສາ ສວນປູກ.
- ເງິນວິຊາການ ເພື່ອນຳໃຊ້ ເຂົ້າໃນວຽກງານຊຸກຍູ້ ສົ່ງເສີມ ໃນແຕ່ລະເປົ້າໝາຍ ທີ່ກ່າວມາຂ້າງເທິງນັ້ນ.

3. ພາຍຫລັງສົ່ງແຜນການປະຈຳປີ ໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ແລະ ແຂວງຂອງຕົນແລ້ວ ຕ້ອງສ້າງເປັນໂຄງການ, ແຕ່ງຕັ້ງບຸກຄະລະກອນຮັບຜິດຊອບ ແລະລິເລີ່ມ ການເຄື່ອນໄຫວ ໃນແຕ່ລະໜ້າວຽກ ແຕ່ຫົວທີໂລດ ເພື່ອຮັບປະກັນ ຕົວເລກຄາດໝາຍຂອງແຜນການ ທີ່ໄດ້ຂຶ້ນນັ້ນ ໂດຍບໍ່ຕ້ອງລໍຖ້າ ການອະນຸມັດ ງົບປະມານ ເພາະງົບປະມານບ້ວງນີ້ ແມ່ນຈະໄດ້ນຳໃຊ້ທຶນທີ່ເກັບໄດ້ ຈາກຄ່າພັນທະ ການຂຸດຄົ້ນໄມ້ ແລະເຄື່ອງປ່າຂອງດົງທຳມະຊາດ ຕາມຂໍ້ກຳນົດຊົ່ວຄາວ ສະບັບເລກທີ 111/ກງ,ລົງວັນທີ 14/01/2000.

4. ນອນໃນຂອບເຂດຂອງແຜນການປີ ໃຫ້ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຕ້ອງສ້າງແຜນການໃຊ້ຈ່າຍງົບປະມານ ເປັນງວດໆ ໂດຍອີງໃສ່ໜ້າວຽກແຕ່ລະໄລຍະ ແລະ ສົ່ງໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ( ກົມປ່າໄມ້ ແລະ ກົມແຜນການ ) ເພື່ອສັງລວມ ແລະ ນຳສະເໜີ ກະຊວງ ການເງິນ ພິຈາລະນາ ເບີກຈ່າຍ ເປັນແຕ່ລະງວດໆໄປ ກຳນົດເວລາ ສົ່ງແຜນການ ລະອຽດ ດັ່ງລຸ່ມນີ້ :

- ງວດທີ 1 ວັນທີ 15/10.
- ງວດທີ 2 ວັນທີ 15/01.

- ງວດທີ 3 ວັນທີ່ 15/04.
- ງວດທີ 4 ວັນທີ່ 15/07.

5. ໃນ ແຜນແຕ່ລະງວດ ແລະແຜນການປີ ທີ່ສົ່ງໃຫ້ ກະຊວງ ກະສິກຳ ແລະ ປ່າໄມ້ ( ກົມປ່າໄມ້ ແລະ ກົມແຜນການ ) ນັ້ນ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຕ້ອງສະຫລຸບ ຜົນຄືບໜ້າ ຂອງ ການປະຕິບັດ ແຜນການ, ຜົນໄດ້ຮັບ, ປະສິດທິຜົນ ( ປະລິມານ ແລະ ຄຸນນະພາບ ), ດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ບັນດາສາຍເຫດ, ບົດຮຽນ ແລະ ສະເໜີ ມາດຕະການ ໃນການແກ້ໄຂ ຕິດຄັດໄປພ້ອມ.
6. ມອບໃຫ້ຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ກຳແພງນະຄອນ ແລະ ເຂດພິເສດ ຈັດຕັ້ງປະຕິບັດ ແຜນການ ຊຸກຍູ້ ແລະສົ່ງເສີມປູກໄມ້ເສດຖະກິດ ແລະເຄື່ອງປ່າຂອງດົງເປັນສິນຄ້າຢ່າງເປັນເຈົ້າການ ແລະ ມີ ຄວາມຮັບຜິດຊອບ ຕໍ່ ຜົນສຳເລັດ ຫລື ຄວາມຫລົ້ມເຫລວ ໃນການນຳໃຊ້ທຶນດັ່ງກ່າວ ໃນແຂວງຂອງຕົນ
7. ມອບໃຫ້ ກົມປ່າໄມ້ ແລະ ແຜນການ ເປັນຜູ້ຊຸກຍູ້,ຕິດຕາມ,ກວດກາ ແລະປະເມີນຜົນການປະຕິບັດ ບົດແນະນຳສະບັບ ນຂອບເຂດ ທົ່ວປະເທດ ໃຫ້ໄດ້ຮັບຜົນ ເປັນຢ່າງດີ ແລະ ລາຍງານໃຫ້ ກະຊວງ ກະສິກຳ າໄມ້ ຢ່າງເປັນປົກກະຕິ.

ວຽງຈັນ, ວັນທີ 03 MAR 2000

ຕ. ລັດຖະມົນຕີ ຫົວໜ້າ ກະຊວງ ກະສິກຳ ແລະ ປ່າໄມ້

ກະຊວງ ກະສິກຳ ແລະ ປ່າໄມ້

ລັດຖະມົນຕີ

ສີວາເຮັ້ງ ຣາຊະພົນ

<u>ບ່ອນນຳສົ່ງ</u> :

- ຫ້ອງວ່າການ ສູນກາງພັກ ( ໃຊ້ຕາງລາຍງານ )
- ຫ້ອງວ່າການ ສຳນັກງານ ນາຍົກລັດຖະມົນຕີ ( ໃຊ້ຕາງລາຍງານ )
- ກະຊວງ ການເງິນ ( ເພື່ອຊາບ )
- ກະຊວງ ການຄ້າ ແລະ ທ່ອງທ່ຽວ ( ເພື່ອຊາບ )
- ທະນາຄານ ແຫ່ງ ສປປ ລາວ ( ເພື່ອຊາບ )
- ຫ້ອງວ່າການ ປົກຄອງແຂວງ, ກຳແພງນະຄອນ ( ເພື່ອຊາບ ) ແລະ ເຂດພິເສດ
- ກົມ ແຜນການ ( ເພື່ອປະຕິບັດ )
- ກົມ ປ່າໄມ້ ( ເພື່ອປະຕິບັດ )
- ເກັບມ້ຽນ